ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງໂຍທາທິການ ແລະ ຂົນສົ່ງ
ກົມການບິນພົນລະເຮືອນ

ເລກທີ 4687 /ກບພຮ
ນະຄອນຫຼວງວຽງຈັນ, ລົງວັນທີ 30 ຕຸລາ 2026.

ໜັງສືແຈ້ງເຊີນປະມູນ

- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ວ່າດ້ວຍການຈັດຕັ້ງ ແລະ ການເຄື່ອນໄຫວ ວຽກງານ ຂອງກົມການບິນພົນລະເຮືອນ ສະບັບເລກທີ 11111/ຍທຂ, ລົງວັນທີ 25 ພຶດສະພາ 2022;
- ອີງຕາມ ຂໍ້ຕົກລົງ ຂອງລັດຖະມົນຕີ ກະຊວງໂຍທາທິການ ແລະ ຂົນສົ່ງ ວ່າດ້ວຍການແຕ່ງຕັ້ງຄະນະກຳມະການ ຄົ້ນຄວ້າ ແລະ ດຳເນີນການປະມູນຈັດຊື້-ຈັດຈ້າງ ໂຄງການສ້ອມແປງ ເສັ້ນທາງເຂົ້າ-ອອກ ສະໜາມບິນສາກົນວັດໄຕ ເພື່ອຮີບດ່ວນແກ້ໄຂຄວາມແອອັດຂອງສະພາບຫົນທາງ. ສະບັບເລກທີ 24526/ຍທຂ, ລົງວັນທີ 07 ຕຸລາ 2026.

1. ໃນນາມຄະນະກຳມະການຈັດຊື້-ຈັດຈ້າງ ກົມການບິນພົນລະເຮືອນ, ກະຊວງໂຍທາທິການ ແລະ ຂົນສົ່ງ ໄດ້ຮັບອະນຸມັດງົບປະມານ ເພື່ອຈັດຕັ້ງປະຕິບັດວຽກງານຈັດຊື້-ຈັດຈ້າງ ສ້ອມແປງ ເສັ້ນທາງເຂົ້າ-ອອກ ສະໜາມບິນສາກົນວັດໄຕ ເພື່ອຮີບດ່ວນແກ້ໄຂຄວາມແອອັດຂອງສະພາບຫົນທາງ. ລາຍລະອຽດໄດ້ລະບຸໄວ້ໃນເອກະສານຄຳແນະນຳການປະມູນ;
2. ຄະນະກຳມະການຈັດຊື້-ຈັດຈ້າງ ກົມການບິນພົນລະເຮືອນ, ກະຊວງໂຍທາທິການ ແລະ ຂົນສົ່ງ ຂໍຮຽນເຊີນບັນດາ ບໍລິສັດຜູ້ຮັບເໝົາ ທີ່ມີຄວາມສົນໃຈ ແລະ ມີຄວາມເໝາະສົມ ເຂົ້າຮ່ວມຊື້ຊອງ ແລະ ຍື່ນຊ່ອງປະມູນໃນການຈັດຕັ້ງ ປະຕິບັດວຽກງານຈັດຊື້-ຈັດຈ້າງ ສ້ອມແປງຫ້ອງການ ຂອງກົມການບິນພົນລະເຮືອນ ຊຶ່ງມີລາຍລະອຽດ ດັ່ງນີ້:
   - ໂຄງການສ້ອມແປງ ເສັ້ນທາງເຂົ້າ-ອອກ ສະໜາມບິນສາກົນວັດໄຕ ເພື່ອຮີບດ່ວນແກ້ໄຂຄວາມແອອັດຂອງສະພາບຫົນທາງ. ຊອງປະມູນ 1/2,000,000 ກີບ (ກຳນົດເປີດຂາຍຊອງປະມູນ ໃນວັນທີ 30 ຕຸລາ 2026);
3. ການປະມູນຈະດຳເນີນຕາມຂັ້ນຕອນການປະມູນເປີດກວ້າງ (ພາຍໃນ) ຕາມທີ່ໄດ້ກຳນົດໄວ້ຢູ່ໃນກົດໝາຍ ວ່າດ້ວຍ ການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 30/ສພຊ, ລົງວັນທີ 02 ພະຈິກ 2017 ແລະ ຄຳແນະນຳກ່ຽວ ກັບ ການຈັດຕັ້ງປະຕິບັດກົດໝາຍ ວ່າດ້ວຍການຈັດຊື້-ຈັດຈ້າງ ດ້ວຍທຶນຂອງລັດ ສະບັບເລກທີ 0477/ກງ, ລົງວັນທີ 13 ກຸມພາ 2019;
4. ການປະມູນໃນຄັ້ງນີ້ ອະນຸຍາດໃຫ້ທຸກບໍລິສັດທີ່ມີຄຸນວຸດທິທີ່ເໝາະສົມ ສົນໃຈເຂົ້າຮ່ວມແຂ່ງຂັນປະມູນ. ສາມາດ ຕິດຕໍ່ພົວພັນເອກະສານປະມູນໄດ້ທີ່ ກົມການບິນພົນລະເຮືອນ ກະຊວງໂຍທາທິການ ແລະ ຂົນສົ່ງ. ເບີໂທຕິດຕໍ່ 020 22404897 ແລະ 020 54777775 ໃນວັນລັດຖະການ;
5. ຊອງປະມູນຈະຕ້ອງສົ່ງກ່ອນເວລາ 13 ພະຈິກ 2026 ໂມງ ຂອງວັນທີ 13:30 ໂມງ ຊອງປະມູນທຸກຊອງຈະໄດ້ເປີດ ໃນວັນທີ 13 ພະຈິກ 2026 ເວລາ 14:00 ໂມງ ທີ່ຫ້ອງປະຊຸມ ຂອງກົມການບິນພົນລະເຮືອນ, ກະຊວງໂຍທາທິ ການ ແລະ ຂົນສົ່ງ ໂດຍຊ່ອງໜ້າຜູ້ຕາງໜ້າຂອງຜູ້ປະມູນທີ່ຖືກແຕ່ງຕັ້ງ ແລະ ບຸກຄົນອື່ນທີ່ສົນໃຈເຂົ້າຮ່ວມ;
6. ຫາກຊອງປະມູນໃດສົ່ງຊ້າກວ່າເວລາທີ່ກຳນົດໄວ້ຈະບໍ່ຮັບເອົາ ແລະ ສົ່ງຄືນໂດຍບໍ່ມີການເປີດ.

ດັ່ງນັ້ນ, ຈຶ່ງແຈ້ງເຊີນມາຍັງທ່ານເຂົ້າຮ່ວມປະມູນຈັດຊື້ດັ່ງກ່າວຕາມທາງຄອນດ້ວຍ.

ເຊັນແທນ ຫົວໜ້າກົມ
ຮອງຫົວໜ້າກົມ

ແສງສະໜອມ ຈັນທະວົງ